**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ຄະນະຈັດຕັ້ງສູນກາງພັກ

ຫ້ອງການ

ເລກທີ 894 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 31 ຕຸລາ 2025

# ໜັງສືແຈ້ງເຊີນປະມູນ

1. ຫ້ອງການ ຄະນະຈັດຕັ້ງສູນກາງພັກ ຂໍເຊີນບັນດາ ບໍລິສັດ, ໂຮງພິມ ທີ່ສົນໃຈ ແລະ ມີເງື່ອນໄຂຄົບຖ້ວນ ເຂົ້າຍື່ນຊອງປະມູນ ໃນການຈັດພິມໃບຢັ້ງຢືນຫຼຽນໄຊແຮງງານ ຊັ້ນ I, ຊັ້ນ II, ຊັ້ນ III, ໃບຢັ້ງຢືນຫຼຽນກາແຮງງານ ແລະ ໃບຍ້ອງຍໍລັດຖະບານ ຂອງຄະນະຈັດຕັ້ງສູນກາງພັກ.
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30 /ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477 /ກງ, ລົງວັນທີ 13 ກຸມພາ 2019.
3. ການປະມູນນີ້ແມ່ນເປີດກ້ວາງໃຫ້ທຸກໆ ບໍລິສັດ, ໂຮງພິມ ຂອງນິຕິບຸກຄົນພາຍໃນ ທີ່ດຳເນີນທຸລະກິດຢູ່ໃນ ນະຄອນຫຼວງວຽງຈັນ, ມີໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ, ມີເລກປະຈຳຕົວຜູ້ເສຍອາກອນ ແລະ ມີໃບຢັ້ງຢືນການປະຕິບັດພັນທະອາກອນ ຖືກຕ້ອງຕາມກົດໝາຍກຳນົດ.
4. ບໍລິສັດ, ໂຮງພິມ ທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນເອກະສານປະມູນຄົບຊຸດໄດ້ທີ່ ພະແນກຄຸ້ມຄອງ-ບໍລິຫານ ຫ້ອງການ ຄະນະຈັດຕັ້ງສູນກາງພັກ (ເບີໂທລະສັບ 020 29991994) ບ້ານສີສະຫວາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ໃນໂມງລັດຖະການ 8:00-11:30 ແລະ 13:30-16:00 ໂມງ, ນັບແຕ່ວັນທີ 29 ຕຸລາ 2025 ຫາ 18 ພະຈິກ 2025, ລາຄາຊອງປະມູນຊອງລະ 2,000,000 ກີບ (ສອງລ້ານກີບ) ຈຳນວນເງິນດັ່ງກ່າວນີ້ຈະບໍ່ສົ່ງຄືນ ແລະ ການຊຳລະຕ້ອງຈ່າຍເປັນເງິນສົດເທົ່ານັ້ນ.
5. ກຳນົດສົ່ງຊອງປະມູນ ຕ້ອງສົ່ງໃຫ້ພະແນກຄຸ້ມຄອງ-ບໍລິຫານ ຫ້ອງການ ຄະນະຈັດຕັ້ງສູນກາງພັກ ກ່ອນເວລາ 16:00 ໂມງ ຂອງວັນທີ 18 ພະຈິກ 2025, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. **ກຳນົດການເປີດຊອງປະມູນແມ່ນເວລາ 14:00 ໂມງ ຂອງວັນທີ 19 ພະຈິກ 2025 ທີ່ຫ້ອງປະຊຸມ ຊັ້ນ 3 ຕຶກຄະນະຈັດຕັ້ງສູນກາງພັກ (ໃນຮົ້ວຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ).** ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ.
6. ເອກະສານປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນມາພ້ອມໃນມູນຄ່າ ບໍ່ໃຫ້ຫລຸດ 2% (ສອງສ່ວນຮ້ອຍ) ຂອງມູນຄ່າປະມູນ ແລະ ໜັງສືຄ້ຳປະກັນການປະມູນ ຕ້ອງແມ່ນໜັງສືຄ້ຳປະກັນຂອງທະນາຄານ ທີ່ຖືກຕ້ອງຕາມແບບຟອມທີ່ກຳນົດໃນເອກະສານປະມູນ.

**ເຊັນແທນ ຫົວໜ້າຫ້ອງການ**

**ຮອງຫົວໜ້າຫ້ອງການ**

ຄະນະຈັດຕັ້ງສູນກາງພັກ ຫ້ອງການ

ລັດສະໝີ ພົມພັກດີ